


# ການຊ່ວຍເຫຼືອຜູ້ສູງອາຍຸທີ່ໄດ້ຮັບຜົນກະທົບສະຫວ່າງວຽກເກົ່າຫາວຽກໃໝ່

ໂຄງການຊ່ວຍເຫຼືອແຮງງານ (RTAA) ອານຸຍາດໃຫ້ພະນັກງານຜູ້ສູງອາຍຸທີ່ມີສິດທິໄດ້ຮັບເງິນຫວ່າງງານ ຫຼື ເງິນເດືອນ ລະຫວ່າງວຍກເກົ່າ ແລະ ວຽກໃໝ່ຂອງທ່ານ. ທ່ານອາດມີສິດໄດ້ຮັບ RTAA ຖ້າ:

- ທ່ານມີອາຍຸ 50 ປີ
- ທ່ານເສຍວຽກງານເນື່ອງຈາກການແຂ່ງຂັນຕ່າງປະເທດ, ຫຼື ວຽກຂອງທ່ານໄດ້ຍ້າຍຖານໄປຕ່າງປະເທດ
- ທ່ານພົບງານໃໝ່ແຕ່ຕ້ອງກັບໄປເລີ່ມຕົ້ນໃໝ່ (ຫຼື ປິດ) ເງິນເດືອນ
- ທ່ານໄດ້ຮັບເງິນຕອບແທນຕໍ່າກວ່າ $50,000 ຕໍ່ປີ
- ທ່ານສາມາດນໍາໃຊ້ໄດ້ເຖິງ $10,000 ໃນລາຍຮັບເພີ່ມຂຶ້ນຕະຫຼອດສອງປີຖັດໄປ.
- ທ່ານອາດຕ້ອງການໄດ້ຄືນບາງສ່ວນທີ່ທ່ານໄດ້ຈ່າຍໄປກັບເງິນປະກັນສຸຂະພາບແບບປຣິມຣູມ

ຄ່າແຮງງານເສີມນີ້ແມ່ນສໍາລັບພະນັກງານທີ່ໄດ້ຮັບການຄໍານວນສິດທິໄດ້ຮັບຂອງໂຄງການຊ່ວຍເຫຼືອດ້ານແຮງງານ (TAA) ພະແນກແຮງງານ ແລະ ສະຫວັດດີການ ລັດນິວຢອກ. ເພື່ອໃຫ້ສາມາດມີສິດໄດ້ຮັບ ທ່ານຕ້ອງເຮັດວຽກຫາເງິນເຕັມເວລາເພື່ອຫາເງິນຄ່າຈ້າງລວມໃນແຕ່ລະປີໃຫ້ໄດ້ຫຼາຍກວ່າ 50,000 (ບໍ່ລວມເງິນຄ່າເຮັດວຽກລ່ວງເວລາ). ທ່ານອາດມີຄຸນສິດໄດ້ຮັບເຖິງ $10,000 ຕະຫຼອດໄລຍະສອງປີ.

ກ່ອນອື່ນໝົດ, ໃຫ້ນໍາເອົາເອກະສານຄິດໄລ່ສິດທິໄດ້ຮັບໄປຍື່ນໃຫ້ຫ້ອງການຊ່ວຍເຫຼືອແຮງງານ (ຟອມ TA722) ທີ່ສູນປະສານງານໃຫ້ລັດນິວຢອກປະຈໍາທ້ອງຖິ່ນຂອງທ່ານ. ທາງພະແນກແຮງງານ ລັດນິວຢອກຈະຕ້ອງຄໍານວນວ່າທ່ານມີສິດໄດ້ຮັບ TAA ຫຼືບໍ່.

ຖ້າທ່ານຍັງບໍ່ມີແບບຟອມໃນການຄໍານວນສິດທິຂອງພະແນກແຮງງານ ລັດນິວຢອກ ແລະ ທ່ານຕົກງານ ເນື່ອງຈາກແຮງງານສາກົນ, ກະລຸນາເຂົ້າໄປຂໍຄໍາປຶກສານໍາ ສູນປະສານງານໃຫ້ລັດນິວຢອກປະຈໍາທ້ອງຖິ່ນຂອງທ່ານ. ຈະມີພະນັກງານຜູ້ໜຶ່ງຊ່ວຍຮ້ອງຂໍແທນທ່ານ.

## ຄວາມຈິງອື່ນໆກ່ຽວກັບ RTAA

- ທ່ານອາດເຂົ້າໂຄງການ RTAA ພາຍຫຼັງສໍາເລັດໂຄງການຝຶກອົບຮົມຕົວຈິງໃນໜ້າວຽກ (OJT) ຫຼື ໂຄງການຝຶກໃນຫ້ອງຮຽນ.
- ໃນຂະນະທີ່ RTAA ກໍານົດໃຫ້ເຮັດວຽກເຕັມເວລາ, ພວກເຮົາຍົກເວັ້ນຖ້າທ່ານລົງທະບຽນໃນໂຄງການຝຶກອົບຮົມທີ່ TAA ອະນຸມັດ (ຢ່າງໜ້ອຍ 20 ຊົ່ວໂມງຕໍ່ອາທິດ)
- ຖ້າທ່ານປະຕິເສດເຂົ້າຮ່ວມໂຄງການ RTAA ໂດຍບໍ່ເຂົ້າຝຶກອົບໂຮມ, ທ່ານຍັງມີສິດທິສໍາລັບການຝຶກອົບຮົມ TAA ໃນອະນາຄົດ
- ທ່ານມີສິດທິສໍາລັບ ສິນເຊື່ອອາກອນຄຸ້ມຄອງສຸຂະພາບ (HCTC). HCTC ແມ່ນສິນເຊື່ອອາກອນສໍາລັບຜູ້ເຂົ້າຮ່ວມ TAA, ເພື່ອຊ່ວຍໃນການຈ່າຍປະກັນໄພສຸຂະພາບແບບປຣິມຣູມໃຫ້ຄອບຄົວຂອງທ່ານ ແລະ ຕົວທ່ານ; ຜູ້ເຂົ້າຮ່ວມທີ່ມີສິດທິຈະໄດ້ຮັບສິນເຊື່ອອາກອນ 72.5 ສ່ວນຮ້ອຍ ຂອງຄ່າປະກັນສຸຂະພາບແບບປຣິມຣູມທັງໝົດ
- ຖ້າຫາກທ່ານມີຫຼາຍກວ່າໜຶ່ງນາຍຈ້າງ, ພວກເຮົາລວມເອົາຄ່າຈ້າງຈາກວຽກທັງໝົດເຂົ້າໃນການຄິດໄລ່ເພື່ອຕັດສິນວ່າທ່ານສາມາດເຖິງຂີດຈໍາກັດຄ່າຈ້າງແຮງງານຄືນຫປະຈໍາປີ $50,000
- ພວກເຮົາອາດພິຈາລະນາບັນດາວຽກທີ່ເລີ່ມຕົ້ນຫາການແຍກຂອງທ່ານ (ກັບຫຼັງທີ່ກະທົບຕໍ່ການຮັບຈ້າງ) ເພື່ອມີສິດທິໄດ້ຮັບການຊ່ວຍເຫຼືອຈາກ RTAA

ຂໍ້ມູນເພີ່ມເຕີມກ່ຽວກັບຜົນປະໂຫຍດ, ເຂົ້າເບິ່ງໄດ້ທີ່ **www.doleta.gov/tradeact/**


ພະແນກແຮງງານລັດ New York ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ອຸປະກອນຊ່ວຍ ແລະ ການບໍລິການຊ່ວຍເຫຼືອແມ່ນມີໃຫ້ແກ່ບຸກຄົນທີ່ມີຄວາມພິການຕາມຄໍາຂໍ.
NEW YORK STATE OF OPPORTUNITY. Department of Labor